ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 1328 /ອຄ.ທຄວ

ນະຄອນຫຼວງວຽງຈັນ, ວັນທີ 13 JUL 2015

# ແຈ້ງການ

ເຖິງ: - ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ

- ຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ເທດສະບານ
- ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ

ເລື່ອງ: ບັນຊີປະເພດທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ (ສະບັບປັບປຸງ / ຄ໋ 02-2015)

- ອີງໃສ່ມາດຕາ 13 ຂອງຂໍ້ຕົກລົງ, ເລກທີ 1005/ອຄ.ຄພນ, ລົງວັນທີ 22 ພຶດສະພາ 2015, ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະ ການຄ້າຂາຍຍ່ອຍ ;
- ອີງຕາມ ຂໍ້ 1 (ດ້ານເນື້ອໃນເອກະສານ) ຕາມໜັງສືແຈ້ງຂອງກົມການຄ້າພາຍໃນ, ສະບັບເລກທີ 0515/ຄພນ.ຄຕສ, ລົງວັນທີ 17 ມິຖຸນາ 2015 ;
- ອີງຕາມໜັງສືສະເໜີ ຂອງຫ້ອງວ່າການທະນາຄານແຫ່ງ ສປປ ລາວ, ສະບັບເລກທີ 685/ຫກ, ລົງວັນທີ 16/10/2013 ກ່ຽວກັບການເພີ່ມທຸລະກິດໂຮງຊວດຈຳ ເຂົ້າໃນບັນຊີປະເພດທຸລະກິດສະຫງວນໄວ້ສຳລັບພົນລະເມືອງລາວ.

ເພື່ອຮັກສາ ບາງປະເພດທຸລະກິດທີ່ມີຄວາມສຳຄັນ ແລະ ຈຳເປັນ ສຳລັບປະຊາຊົນລາວບັນດາເຜົ່າ ໃນການປະກອບທຸລະກິດ ສ້າງວຽກເຮັດງານທຳ ສ້າງລາຍໄດ້ໃຫ້ມີຄວາມໝັ້ນຄົງ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ, ກະຊວງອຸດສາຫະກຳ ແລະ ການຄ້າ (ບົນພື້ນຖານ ການຄົ້ນຄວ້າ ສະເໜີຂອງບັນດາຂະແໜງການກ່ຽວຂ້ອງ), ແຈ້ງ ກ່ຽວກັບການປັບປຸງ ບາງລາຍການປະເພດທຸລະກິດ ໃນ (ບັນຊີ ຄ໋ 01-2013) ມາເປັນ (ບັນຊີ ຄ໋ 02-2015) ມາຍັງພາກສ່ວນທີ່ກ່ຽວຂ້ອງ ຊາບ ແລະ ຈັດຕັ້ງປະຕິບັດ ດັ່ງນີ້:

1. ປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ແມ່ນປະເພດທຸລະກິດ ທີ່ເປັນມູນເຊື້ອອັນຍາວນານຂອງປະຊາຊົນບັນດາເຜົ່າ, ປະເພດທຸລະກິດທີ່ບໍ່ຈຳເປັນຕ້ອງໃຊ້ຄວາມຮູ້ສູງ ຫລື ທຶນຮອນຫຼາຍໃນການປະກອບທຸລະກິດ ຫລື ທຸລະກິດບາງປະການ ທີ່ລັດປະສົງຢາກສະຫງວນໄວ້ສຳລັບພົນລະເມືອງລາວ ເພື່ອຮັກສາໄວ້ ຊຶ່ງທຸລະກິດທີ່ມີຄວາມສຳຄັນຈຳເປັນ ຫລື ທຸລະກິດທີ່ເປັນເອກະລັກຂອງຊາດ ໃຫ້ຢູ່ຄູ່ຄົນລາວ ສ້າງວຽກເຮັດ

ງານທຳ ສ້າງລາຍໄດ້ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ. ພົນລະເມືອງລາວ ໝາຍເຖິງບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສັນຊາດ ;

2. ບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ (ສະບັບປັບປຸງ / ຄ 02–2015 (ຄັດຕິດມາພ້ອມນີ້) ;

3. ການອະນຸຍາດ ຫລື ຂຶ້ນທະບຽນວິສາຫະກິດ ໃຫ້ບຸກຄົນ ຫລື ນິຕິບຸກຄົນທີ່ບໍ່ຖືກຕ້ອງ ຕາມແຈ້ງການ ສະບັບນີ້ ລ້ວນແຕ່ເປັນໂມຄະ. ຜູ່ລະເມີດ ຕ້ອງຮັບຜິດຊອບຕໍ່ໜ້າກົດໝາຍ ;

4. ພາກສ່ວນ ຫລື ຂະແໜງການກ່ຽວຂ້ອງ ຕ້ອງມີນິຕິກຳ ດັດສົມລະອຽດ ຈະແຈ້ງ ຕໍ່ທຸກລາຍການປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ ເພື່ອຄວາມສະດວກໃນການຈັດຕັ້ງປະຕິບັດ;

5. ໃນໄລຍະຈັດຕັ້ງປະຕິບັດ ແຈ້ງການສະບັບນີ້ ຫາກພາກສ່ວນ ຫລື ຂະແໜງການໃດ ເຫັນວ່າມີອັນຍັງບໍ່ທັນສອດຄ່ອງ ຢາກເພີ່ມເຂົ້າ ຫລື ຕັດອອກຈາກບັນຊີດັ່ງກ່າວ ໃຫ້ແຈ້ງກະຊວງອຸດສາຫະກຳ ແລະ ການຄ້າເພື່ອປັບປຸງ ປະກາດໃຊ້ເພີ່ມເຕີມຕໍ່ໄປ ;

6. ແຈ້ງການສະບັບນີ້, ປ່ຽນແທນແຈ້ງການ, ສະບັບເລກທີ 1590/ອຄ.ທຄວ, ລົງວັນທີ 26 ສິງຫາ 2013 ກ່ຽວກັບບັນຊີປະເພດທຸລະກິດສະຫງວນໄວ້ ສຳລັບພົນລະເມືອງລາວ.

ແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ທ.ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ

ນາງວິລະຫວາດ ສຸຂະຕວງນິກາສາ

## ບັນຊີ ຄໍ 02 - 2015

## ບັນຊີປະເພດທຸລະກິດສະຫງວນໄວ້ສໍາລັບພົນລະເມືອງລາວ (ສະບັບປັບປຸງ)

| ຂະແໜງການ | ເລກລະຫັດ ISIC | ປະເພດທຸລະກິດ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| ກະສິກໍາ, ປ່າໄມ້ ແລະ ການປະມົງ | | | |
| | 0230 | ການເກັບເຄື່ອງປ່າຂອງດົງ ຫຼື ພືດພັນຈາກປ່າໄມ້ (ສໍາລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດການຊຸດຄົ້ນຊັບພະຍາກອນທໍາມະຊາດທີ່ເປັນຢາ) | ກຊ ກກປ, ກຊ ຊສ ແລະ ກຊ ສທ |
| ອຸດສາຫະກໍາປຸງແຕ່ງ | | | |
| | 1312 | ການຕໍາແຜ່ນແພ (ສໍາລັບ ISIC ນີ້ແມ່ນສະຫງວນສະເພາະການຕໍາຫູກລວມທັງການອອກແບບ, ການເກັບ, ການຈົກລວດລາຍ ແລະ ການມັດໝີ່ແບບພື້ນເມືອງລາວ) | ກຊ ອຄ |
| | 1321 | ການຖັກ ແລະ ແສ່ວຜ້າແພ (ສໍາລັບ ISIC ນີ້ແມ່ນສະຫງວນສະເພາະການຖັກແສ່ວຜ້າໄໝລາວທີ່ມີລວດລາຍສິນລະປະບູຮານຂອງ ຊົນເຜົ່າຕ່າງໆທີ່ເປັນເອກະລັກ) | ກຊ ອຄ ແລະ ກຊ ຖວທ |
| | 1629 | ການຜະລິດ ຜະລິດຕະພັນອື່ນຈາກໄມ້, ການຜະລິດເຄື່ອງໃຊ້ຈາກຫວາຍ, ເຟືອງ ແລະວັດຖຸຈັກສານ (ສໍາລັບ ISIC ນີ້ແມ່ນສະຫງວນສະເພາະໂຮງງານປຸງແຕ່ງໄມ້ຂະໜາດນ້ອຍແບບຄອບຄົວ ແລະ ການເຮັດທຸລະກິດສະເພາະກ່ຽວກັບການແກະສະຫຼັກໄມ້ ແລະ ການຈັກສານອື່ນໆທີ່ ມີລວດລາຍສິນລະປະ ບູຮານຂອງຊົນເຜົ່າຕ່າງໆທີ່ເປັນເອກະລັກ) | ກຊ ອຄ ແລະ ກຊ ຖວທ |
| | 1812 | ການເຄື່ອນໄຫວບໍລິການກ່ຽວກັບການພິມ (ສໍາລັບ ISIC ນີ້ແມ່ນສະຫງວນສະເພາະ ວຽກງານພາບພິມ) | ກຊ ຖວທ |
| | 2393 | ການຜະລິດຕະພັນເຄື່ອງປັ້ນດິນເຜົາ ແລະ ຖ້ວຍຊາມທີ່ເປັນກະເບື້ອງອື່ນໆ (ສໍາລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະ ກ່ຽວກັບ ການຜະລິດເຄື່ອງປັ້ນດິນເຜົາແບບຫັດຖະກໍາພື້ນເມືອງລາວ ແລະ ລວດລາຍ ສິນລະປະບູຮານ ຂອງຊົນເຜົ່າຕ່າງໆທີ່ເປັນເອກະລັກ) | ກຊ ຖວທ ແລະ ກຊ ອຄ |
| | 3211 | ການຜະລິດເຄື່ອງເອ້ປະດັບ ແລະ ຊິ້ນສ່ວນປະກອບເຄື່ອງເອ້ປະດັບ (ສໍາລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະກ່ຽວກັບການຜະລິດແບບຫັດຖະກໍາພື້ນເມືອງລາວ ແລະ ລວດລາຍສິນລະປະບູຮານຂອງຊົນເຜົ່າຕ່າງໆ ທີ່ເປັນ ເອກະລັກ) | ກຊ ຖວທ ແລະ ກຊ ອຄ |
| | 3212 | ການຜະລິດເຄື່ອງເອ້ຫຼຽນ ແລະ ສິ້ນສ່ວນປະກອບ (ສໍາລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະ ກ່ຽວກັບການຜະລິດແບບຫັດຖະກໍາພື້ນເມືອງລາວ ແລະ ລວດລາຍສິນລະປະບູຮານຂອງ ຊົນເຜົ່າ ຕ່າງໆທີ່ເປັນເອກະລັກ ) | ກຊ ຖວທ ແລະ ກຊ ອຄ |

| | | | |
|---|---|---|---|
| **ການສະໜອງໄຟຟ້າ, ອາຍແກັສ, ອາຍຮ້ອນ ແລະ ອາກາດປັບແຕ່ງ** | | | |
| | 3510 | ການຜະລິດ, ຖ່າຍກຳລັງ ແລະ ແຈກຈ່າຍກະແສໄຟຟ້າ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະ ການດຳເນີນທຸລະກິດໂຄງການໄຟຟ້ານ້ຳຕົກ ໃນ ສປປ ລາວ ທີ່ມີກຳລັງຕິດຕັ້ງ 15 ເມກາວັດ ລົງມາໃນຮູບແບບບໍ່ມີການສຳປະທານໂຄງການ) | **ກຊ ພບ** |
| **ການກໍ່ສ້າງ** | | | |
| | 4321 | ການຕິດຕັ້ງໄຟຟ້າ (ສຳລັບ ISIC ນີ້ແມ່ນສະຫງວນການເຮັດທຸລະກິດສະເພາະການບໍລິການຕິດຕັ້ງລະບົບໄຟຟ້າພາຍໃນອາຄານ) | **ກຊ ພບ** |
| | 4322 | ການຕິດຕັ້ງທໍ່ສົ່ງນ້ຳ, ຕິດຕັ້ງເຄື່ອງເຮັດຄວາມຮ້ອນ ແລະ ເຄື່ອງປັບອາກາດ (ສຳລັບ ISIC ນີ້ແມ່ນສະຫງວນ ການເຮັດທຸລະກິດສະເພາະກ່ຽວກັບການວາງທໍ່ນ້ຳປະປາໃນຕົວເມືອງ, ການຕິດຕັ້ງລະບົບນ້ຳປະປາ ແລະ ຕິດຕັ້ງລະບົບປັບອາກາດໃນອາຄານ). | **ກຊ ຍທຂ** |
| **ການຄ້າຂາຍຍົກ ແລະ ຂາຍຍ່ອຍ; ສ້ອມແປງລົດຍົນ ແລະ ລົດຈັກ** | | | |
| | 4690 | ການຄ້າຂາຍຍົກທີ່ບໍ່ເປັນອັນສະເພາະ (ໝາຍເຖິງທຸລະກິດການຄ້າຂາຍຍົກ ທີ່ໃຊ້ທຶນຈົດທະບຽນຕໍ່າກວ່າ 4 ຕື້ກີບລົງມາ) | **ກຊ ອຄ** |
| | 4719 | ຂາຍຍ່ອຍອື່ນໆຕາມຮ້ານຄ້າທົ່ວໄປ (ໝາຍເຖິງທຸລະກິດການຄ້າຂາຍຍ່ອຍທີ່ໃຊ້ທຶນຈົດທະບຽນຕໍ່າກວ່າ 4 ຕື້ກີບລົງມາ) | **ກຊ ອຄ** |
| **ການຂົນສົ່ງ ແລະ ສາງສິນຄ້າ** | | | |
| | 4921 | ຂົນສົ່ງໂດຍສານທາງບົກພາຍໃນຕົວເມືອງ ຫຼື ແຖບຊານເມືອງ | **ກຊ ຍທຂ** |
| | 4922 | ການຂົນສົ່ງໂດຍສານທາງບົກອື່ນໆ (ຍົກເວັ້ນທຸລະກິດການບໍລິການລົດແທັກຊີມີເຕີ) | **ກຊ ຍທຂ** |
| | 5221 | ການເຄື່ອນໄຫວບໍລິການປະຈຳວັນໃຫ້ການຂົນສົ່ງທາງບົກ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະກິດຈະການກ່ຽວກັບສະຖານີລົດຂົນສົ່ງໂດຍສານ) | **ກຊ ຍທຂ** |
| **ການເຄື່ອນໄຫວ ດ້ານທີ່ພັກເຊົາ ແລະ ບໍລິການອາຫານ** | | | |
| | 5510 | ການເຄື່ອນໄຫວໃຫ້ທີ່ພັກເຊົາໄລຍະສັ້ນ ( ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດເຮືອນພັກ, ຣີສອດ, ໂຮງແຮມ ລະດັບສາມດາວລົງມາ) | **ກຊ ຖວທ** |
| **ດ້ານຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ** | | | |
| | 5813 | ການພິມ ຂ່າວສານໜັງສືພິມ, ບົດຄວາມ ແລະ ວາລະສານ | **ກຊ ຖວທ** |
| | 5819 | ການເຄື່ອນໄຫວດ້ານການພິມອື່ນໆ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດການສ້າງຕັ້ງສຳນັກພິມຕ່າງໆ) | **ກຊ ຖວທ** |
| | 5920 | ການເຄື່ອນໄຫວຈັດພິມບົດເພັງ ແລະ ບັນທຶກສຽງ | **ກຊ ຖວທ** |
| | 6010 | ການອອກອາກາດທາງວິທະຍຸ (ສຳລັບISICນີ້ແມ່ນສະຫງວນສະເພາະທຸລະກິດ ການສ້າງຕັ້ງສະຖານີວິທະຍຸຢູ່ຊຸມຊົນ) | **ກຊ ຖວທ** |

| | | | |
|---|---|---|---|
| | 6021 | ການອອກອາກາດທາງໂທລະພາບ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດການສ້າງຕັ້ງສະຖານີໂທລະພາບຢູ່ຊຸມຊົນ) | **ກຊ ຖວທ** |
| **ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ** | | | |
| | 6430 | ຄັງເງິນ, ກອງທຶນ ແລະ ກິຈຈັກການເງິນອື່ນໆ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະສ້າງຕັ້ງຄັງເງິນ, ການສ້າງສະຖາບັນການເງິນຈຸລະພາກທີ່ບໍ່ຮັບເງິນຝາກ, ສ້າງຕັ້ງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ) | **ທຫລ** |
| | 6492 | ການໃຫ້ສິນເຊື່ອກູ້ຢືມອື່ນໆ (ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດໂຮງຊວດຈຳ) | **ທຫລ** |
| **ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ** | | | |
| | 7110 | ການເຄື່ອນໄຫວດ້ານສະຖາປັດຕະຍະກຳ ແລະ ວິສາວະກຳ ແລະ ການໃຫ້ຄຳປຶກສາດ້ານເຕັກນິກທີ່ກ່ຽວຂ້ອງ ( ສຳລັບ ISIC ນີ້ແມ່ນ ສະຫງວນການເຮັດທຸລະກິດສະເພາະ ກ່ຽວກັບກິດຈະການ ໃຫ້ຄຳປຶກສາດ້ານການສຳຫຼວດ, ອອກແບບ, ກໍ່ສ້າງ ແລະ ຕິດຕັ້ງດ້ານສະຖາປັດຕະຍະກຳ, ວິສາວະກຳລາວ ທີ່ຕິດພັນທາງ ດ້ານປະຫວັດສາດ, ທຳມະຊາດ ແລະ ວັດທະນະທຳ ແລະ ການອອກແບບ,ກໍ່ສ້າງ ແລະ ຕິດຕັ້ງຕາຂ່າຍໄຟຟ້າແຮງດັນກາງ ແຕ່ 22kv-35kv ແລະ ຕ່ຳ 0.4kv) | **ກຊ ຍທຂ,<br>ກຊ ຖວທ<br>ແລະ ກຊ ພບ** |
| | 7490 | ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ ອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ (ສຳລັບ ISIC ນີ້ແມ່ນສະຫງວນ ການເຮັດທຸລະກິດສະເພາະ ກ່ຽວກັບກິດຈະການແປພາສາລາວ) | **ກຊ ຖວທ** |
| **ການເຄື່ອນໄຫວບໍລິການສະໜັບສະໜູນ ແລະ ຄຸ້ມຄອງ ບໍລິຫານ** | | | |
| | 7810 | ການເຄື່ອນໄຫວຂອງອົງການຈັດຫາງານ (ທຸລະກິດບໍລິການຈັດຫາງານ ) | **ກຊ ຮສສ** |
| | 7920 | ການເຄື່ອນໄຫວບໍລິການຕ້ອນຮັບອື່ນໆ (ສຳລັບ ISIC ນີ້ແມ່ນສະຫງວນທ່ອງທ່ຽວພື້ນທີ່ສະເພາະໃດໜຶ່ງ) | **ກຊ ຖວທ** |
| | 8121 | ອະນາໄມຮັກສາຄວາມສະອາດຕຶກອາຄານທົ່ວໄປ | **ກຊ ຍທຂ** |
| **ການສຶກສາ** | | | |
| | 8522 | ການສຶກສາດ້ານເຕັກນິກ ແລະ ວິຊາຊີບ (ທຸລະກິດສູນພັດທະນາສີມືແຮງງານ, ຍົກເວັ້ນໂຮງຮຽນເຕັກນິກ-ວິຊາຊີບ, ວິທະຍາໄລເຕັກນິກເພາະເປັນການສົ່ງເສີມຕາມຮູບການສຶກສາແຫ່ງຊາດ ໄລຍະ 2 ແຕ່ 2011-2015) | **ກຊ ຮສສ** |
| | 8549 | ການສຶກສາດ້ານອື່ນໆທີ່ບໍ່ທັນຈັດເຂົ້າບ່ອນໃດ ( ສຳລັບ ISIC ນີ້ແມ່ນສະຫງວນສະເພາະທຸລະກິດສອນພາສາລາວໃຫ້ຄົນຕ່າງປະເທດ) | **ກຊ ສສກ** |
| **ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ວຽກງານທາງສັງຄົມ** | | | |
| | 8690 | ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດອື່ນໆ (ສຳລັບISIC ນີ້ສະຫງວນສະເພາະຫ້ອງກວດພະຍາດເອກະຊົນແຕ່ລະປະເພດ, ແຕ່ລະລັກສະນະ ແລະ ແຕ່ລະຂັ້ນໃນຂອບເຂດທົ່ວປະເທດ ) | **ກຊ ສທ** |

| ການເຄື່ອນໄຫວບໍລິການອື່ນໆ | | | |
|---|---|---|---|
| | 9523 | ທຸລະກິດສ້ອມແປງເກີບ ແລະ ເຄື່ອງໜັງ | ກຊ ຖວທ |
| | 9601 | ບໍລິການຊັກປຸກ, ຊັກແຫ້ງປະເພດແຜ່ນແພ ແລະ ຜະລິດຕະພັນຂົນສັດ | ກຊ ຖວທ |
| | 9602 | ບໍລິການຕັດຜົມ ແລະ ເສີມສວຍ (ທີ່ບໍ່ແມ່ນສັນຍະກຳ) | ກຊ ຖວທ |
| | 9603 | ບໍລິການຈັດງານປົງສົບ ແລະ ກິດຈະການທີ່ກ່ຽວພັນ | ກຊ ຖວທ |
| | 9609 | ວຽກປະດັບປະດາສະຖານທີ່ຕ່າງໆ (ສຳລັບ ISICນີ້ ແມ່ນສະຫງວນການເຮັດທຸລະກິດສະເພາະກ່ຽວກັບ ກິດຈະການ ທີ່ຕິດພັນກັບວຽກປະດັບປະດາສະຖານທີ່ ແລະ ກິດຈະການກ່ຽວກັບການຕິດຕັ້ງລະບົບໄຟ, ແສງ, ສີ ແລະ ສຽງ) | ກຊ ຍທຂ<br>ກຊ ຖວທ |

ໝາຍເຫດ :

1. ບັນຊີ ຄໍ 02 – 2015 (ສະບັບປັບປຸງ) ປ່ຽນແທນ ແລະ ລົບລ້າງ ບັນຊີ ຄໍ 01 – 2013;

2. ປະເພດທຸລະກິດໃນບັນຊີ ຄໍ 02 – 2015 ລວມທັງໝົດມີ 37 ກິດຈະການ ຊຶ່ງໄດ້ຄົ້ນຄວ້າ ແລະ ລວບລວມມາຈາກ ຄຳສະເໜີຂອງ ບັນດາກະຊວງ ທີ່ກ່ຽວຂ້ອງ.